*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກກະເພາະແລະ ສຳໄສ້ອັກເສບ ຍ້ອນເຊື້ອໄວຣັສ

*ໂຣກກະເພາະແລະລຳໃສ້ອັກເສບ ສ່ວນຫຼາຍແມ່ນເກີດຂຶ້ນຍ້ອນການ ຕິດເຊື້ອໄວຣັສ ຊຶ່ງເຮັດໃຫ້ຮາກແລະ ຖອກທ້ອງ. ເຊື້ອໄວຣັສເຫຼົ່ານີ້ສາມາດ ແຜ່ຜາຍຈາກຄົນຕໍ່ຄົນໄດ້ຢ່າງງ່າຍດາຍ. ການລ້າງມືໃຫ້ສະອາດດີດ້ວຍສະບູ ແລະນ້ຳກອັກນັ້ນເປັນສິ່ງສຳຄັນຢ່າງຍິ່ງ ເພື່ອປ້ອງກັນການແຜ່ຜາຍ.*

**ສະບັບປັບປຸງແກ້ໄຂ:** 29 ພຶສຈິກາ 2007

## ໂຣກກະເພາະແລະລຳໃສ້ອັກເສບຍ້ອນໄວຣັສແມ່ນຫຍັງ?

ໂຣກກະເພາະແລະລຳໃສ້ອັກເສບຍ້ອນໄວຣັສ (Viral gastroenteritis) ແມ່ນການຕິດເຊື້ອໃນທ້ອງແລະ ໃສ້ທີ່ເປັນກັນຫຼາຍ ຊຶ່ງເຮັດໃຫ້ຮາກແລະຖອກທ້ອງ. ໂຣກນີ້ສາມາດເກີດຂຶ້ນຍ້ອນເຊື້ອໄວຣັສຫຼາຍຊນິດທີ່ ແຕກຕ່າງກັນໄປ, ເຊັ່ນ Rotavirus ແລະ Norovirus (ຊຶ່ງແຕ່ກ່ອນເອີ້ນກັນວ່າໄວຣັສຄ້າຍຄື Norwalk). ນອກນີ້ ຍັງມີສາເຫດຢ່າງອື່ນອີກຫຼາຍຢ່າງທີ່ເຮັດໃຫ້ເປັນ gastroenteritis ຮວມມີ ເຊື້ອແບັກທີເຣັຍ, ຢາເບື່ອ, ແມ່ທ້ອງ, ແລະພະຍາດທີ່ບໍ່ຕິດແປດບາງຢ່າງ.

## ໂຣກນີ້ມີອາການຫຍັງແດ່?

ອາການໃຫຍ່ຂອງໂຣກ viral gastroenteritis ແມ່ນ ຮາກແລະຖ່າຍເປັນນ້ຳ. ອາການຢ່າງອື່ນກໍຮວມມີ ການປັ່ນທ້ອງ, ເປັນໄຂ້, ເຈັບໃນຊ່ອງທ້ອງ, ເຈັບຫົວ, ແລະເຈັບຕາມກ້າມເນື້ອ. ຈາກນັ້ນ ກໍອາດມີອາການ ຮ່າງກາຍຂາດນ້ຳຕາມມາ. ອາດຈະໃຊ້ເວລາ ປະມານນຶ່ງຫາສາມມື້ກ່ອນສໍ່ສະແດງອາການແລະ ຕາມປົກກະຕິຈະເປັນຢູ່ປະມານນຶ່ງຫາສອງມື້, ບາງເທື່ອອາດເປັນດົນກວ່ານັ້ນ.

## ໂຣກນີ້ແຜ່ຜາຍຢ່າງໃດ?

Viral gastroenteritis ແມ່ນໂຣກທີ່ແຜ່ຜາຍຢ່າງງ່າຍໂດຍທາງຮາກຫຼືອາຈົມຂອງຄົນທີ່ຕິດເຊື້ອ ໂດຍຜ່ານ:

- ໂດຍຜ່ານຄົນຕໍ່ຄົນ, ຕົວຢ່າງ ການຈັບມືກັບຄົນທີ່ເຈັບຢູ່ແລະທີ່ມີເຊື້ອໄວຣັສຕິດຢູ່ມືຂອງຄົນນັ້ນ
- ວັດຖຸທີ່ມີເຊື້ອໂຣກຕິດຢູ່
- ອາຫານແລະນ້ຳທີ່ມີເຊື້ອໂຣກຕິດຢູ່

ນອກນີ້ ເຊື້ອໂຣກຍັງອາດແຜ່ພາຍຈາກສ່ວນທີ່ປົວໃນອາກາດເມື່ອຄົນຮາກ. ໃນກໍຣະນີ້ສ່ວນໃຫຍ່ແລ້ວ, ການແຜ່ເຊື້ອຈະເກີດຈາກຄົນທີ່ສໍ່ສະແດງອາການອອກມາໃຫ້ເຫັນແລ້ວ. ຄົນບາງຄົນກໍສາມາດ ແຜ່ພາຍໂຣກໃຫ້ຄົນອື່ນໄດ້ໂດຍບໍ່ສໍ່ສະແດງອາການ, ໂດຍສະເພາະໃນລະຫວ່າງ 48 ຊົ່ວໂມງຫຼັງຈາກເຊົາແລ້ວ.

## ແມ່ນໃຜແດ່ສ່ຽງຕໍ່ການເປັນໂຣກນີ້?

Viral gastroenteritis ສາມາດເປັນໄດ້ກັບຄົນທຸກວັຍ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

ຫຼັງຈາກເຂົ້າຫ້ອງນ້ຳ, ປ່ຽນຜ້າອ້ອມ, ແລະກ່ອນກິນຫຼືປຸງແຕ່ງອາຫານ, ໃຫ້ລ້າງມືໃຫ້ສະອາດດີດ້ວຍສະບູແລະນ້ຳກອັກ ຢ່າງນ້ອຍເປັນເວລາ 10 ວິນາທີ ແລະ ເຊັດມືໃຫ້ແຫ້ງດ້ວຍຜ້າຂົນໜູທີ່ສະອາດ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ການກວດຫາໂຣກ viral gastroenteritis ຕາມປົກກະຕິແມ່ນອີງໃສ່ອາການຂອງຄົນເຈັບ. ການຢັ້ງຢືນຈາກຫ້ອງທົດລອງຖືວ່າສຳຄັນໃນລະຫວ່າງທີ່ໂຣກລະບາດ, ຊຶ່ງຕ້ອງໄດ້ມີການວິຈັຍຕໍ່ຢ່າງອາຈິມ.

## ຈະຮັກສາໂຣກນີ້ໄດ້ຢ່າງໃດ?

ບໍ່ມີການຮັກສາຈຳເພາະສຳລັບໂຣກ viral gastroenteritis ນອກຈາກວ່າຕ້ອງພັກຜ່ອນແລະດື່ມນ້ຳຫຼາຍໆ. ຄົນສ່ວນຫຼາຍຈະເຊົາເອງໂດຍບໍ່ມີອາການແຊກຊ້ອນຫຍັງ. ຢ່າງໃດກໍດີ, viral gastroenteritis ອາດຮ້າຍແຮງໄດ້ສຳລັບຜູ້ທີ່ຮ່າງກາຍມີບັນຫາໃນການຮັບການທົດແທນນ້ຳ ແລະທາດເກືອຍ້ອນການຮາກແລະຖອກທ້ອງ.

ຜູ້ທີ່ຮາກແລະຖອກທ້ອງຄວນຈະ:

- ຢູ່ເຮືອນແລະບໍ່ໄປເຮັດວຽກຫຼືໄປໂຮງຮຽນຫຼືສູນດູແລເດັກໃນລະຫວ່າງທີ່ຍັງເຈັບຢູ່
- ບໍ່ປຸງແຕ່ງອາຫານໃຫ້ຄົນອື່ນຫຼືດູແລຄົນເຈັບ, ເດັກນ້ອຍ, ຫຼື ຜູ້ສູງອາຍຸ. ການຣະມັດຣະວັງໃນເຣື່ອງດັ່ງກ່າວຄວນເຮັດຕໍ່ເນື່ອງຈົນກວ່າອາການຮາກແລະຖອກທ້ອງຈະຢຸດ. ການກະທຳດັ່ງນີ້ແມ່ນຄວນເຮັດໂດຍຜູ້ທີ່ປຸງແຕ່ງອາຫານຢູ່ໃນເຮືອນຕົນເອງຫຼືເຮັດວຽກຢູ່ໃນໂຮງງານຜລິດອາຫານ.
- ໃຫ້ລ້າງມືໃຫ້ສະອາດດີດ້ວຍສະບູແລະນ້ຳກອັກເປັນເວລາ 10 ວິນາທີຫຼັງຈາກເຂົ້າຫ້ອງນ້ຳ.
- ໃຫ້ດື່ມນ້ຳແບບໃສໆຫຼາຍໆ, ຕົວຢ່າງນ້ຳໝາກໄມ້ຫຼືນ້ຳອັດລົມ ປະສົມ 1 ສ່ວນຕໍ່ນ້ຳລ້າ 4 ສ່ວນ, ເພື່ອຫຼີກເວັ້ນອາການຮ່າງກາຍ ຂາດນ້ຳ. ໃຫ້ຫຼີກເວັ້ນນ້ຳໝາກໄມ້ຫຼືນ້ຳອັດລົມທີ່ບໍ່ໄດ້ປົນນ້ຳເພາະວ່າມັນຈະເຮັດໃຫ້ເພີ້ມອາການຂາດ ນ້ຳແລະຖອກທ້ອງ ຫຼາຍ ຂຶ້ນຕື່ມ. ນ້ຳແຮ່ທີ່ໃຊ້ດື່ມເພື່ອທົດແທນນ້ຳແລະທາດເກືອທີ່ສູນເສັຍໄປນັ້ນມີຂາຍຕາມຮ້ານຂາຍຢາທົ່ວໆໄປ. ໃນ ກໍຣະນີ ທີ່ຮ່າງກາຍຂາດນ້ຳຢ່າງຮຸນແຮງອາດຕ້ອງໄດ້ໃສ່ນ້ຳທະເລ.

ສຳລັບຜູ້ທີ່ດູແລຄົນເຈັບດ້ວຍໂຣກ gastroenteritis ຄວນລ້າງມືໃຫ້ສະອາດດີດ້ວຍສະບູແລະ ນ້ຳກອັກຫຼັງຈາກທີ່ຈັບບາຍຄົນເຈັບ. ການລ້າງພື້ນແລະຊັກເຄື່ອງນຸ່ງທີ່ເປື້ອນຈະຊ່ວຍລົດຜ່ອນການ ແຜ່ພາຍຂອງເຊື້ອໄວຣັສນີ້ໄດ້.

ເວລາທຳຄວາມສະອາດຮາກຫຼືອາຈົມ:

- ໃຫ້ໃສ່ຖົງມື
- ໃຫ້ລ້າງມືດ້ວຍສະບູແລະນ້ຳກອັກເປັນເວລາ 10 ວິນາທີຫຼັງຈາກດຶງຖົງມືຖິ້ມແລ້ວ
- ໃຫ້ໃຊ້ເຈັ້ຍທີ່ໃຊ້ແລ້ວຖິ້ມໂລດຫຼືຜ້າເສດຈັບເອົາວັດຖຸໃດໆທີ່ເປື້ອນແລະຫໍ່ມັນໄວ້ໃນຖົງຢາງກ່ອນນຳເອົາ ໄປຖິ້ມໃສ່ໃນຖັງ ຂີ້ເຫຍື້ອ.
- ໃຫ້ທຳຄວາມສະອາດວັດຖຸຫຼືພື້ນດ້ວຍນ້ຳຮ້ອນແລະນ້ຳຢາຂ້າເຊື້ອແລະປ່ອຍໃຫ້ ແຫ້ງຢ່າງທົ່ວເຖິງ.
- ບາງຄົນກໍແນະນຳໃຫ້ໃສ່ຜ້າອັດດັງ.

## ທາງການສາທາຣະນະສຸກມີທ່າທີຢ່າງໃດກ່ຽວກັບໂຣກນີ້?

ການລະບາດຂອງໂຣກ viral gastroenteritis ຈະມີເພີ້ມຂື້ນໃນຊ່ວງຣະດູໜາວ ແລະ ມັກເປັນພາຍໃນຄອບຄົວຫຼືບ່ອນທີ່ໂຮມກັນ ຊຶ່ງຮວມມີ ບ້ານພັກຄົນຊະຣາ, ໂຮງໝໍ, ສູນຝາກເດັກ, ແລະໂຮງຮຽນ. ທ່ານໝໍແລະໂຮງໝໍຕ້ອງ ໄດ້ລາຍງານໃຫ້ທາງຜແນກ ສາທາຣະນະສຸກ ໃນເຂດທ້ອງຖິ່ນໃຫ້ຮູ້ ເມື່ອໃດທີ່ມີຢ່າງນ້ອຍສອງກໍຣະນີຂອງໂຣກ gastroenteritis ຊຶ່ງກ່ຽວຂ້ອງກັນ.

ທາງຜແນກສາທາຣະນະສຸກສາມາດ:

- ແນະນຳວ່າຈະຮູ້ໄດ້ຢ່າງໃດວ່າມີການລະບາດຂອງໂຣກນີ້
- ແນະນຳວ່າຈະຄວບຄຸມໂຣກນີ້ໄດ້ຢ່າງໃດ
- ຊ່ວຍຕິດຕາມເບິ່ງການລະບາດເພື່ອໃຫ້ຮູ້ແຫຼ່ງທີ່ມາແລະຮູບແບບການແຜ່ພາຍໃຫ້ກັນ
- ແນະນຳໃນການແຍກຄົນທີ່ເປັນໂຣກ viral gastroenteritis ອອກຈາກບ່ອນເຮັດວຽກ, ໂຮງຮຽນຫຼືແຫຼ່ງຊຸມນຸມອື່ນໆ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |